ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການກວດກາແຫ່ງລັດ

ເລກທີ 258/ອກຫລ
ນະຄອນຫຼວງວຽງຈັນ, ວັນທີ 26. ມິຖຸນາ 2025

# ຄໍາແນະນໍາ
# ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ

ພາຍຫຼັງ ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄດ້ອອກມະຕິຮັບຮອງເອົາກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 52/ສພຊ, ລົງວັນທີ 28 ມິຖຸນາ 2024, ປະທານປະເທດອອກລັດຖະດໍາລັດປະກາດໃຊ້ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 114/ປປທ, ລົງວັນທີ 12 ສິງຫາ 2024, ຊຶ່ງກົດໝາຍດັ່ງກ່າວ ປະກອບດ້ວຍ 10 ພາກ, 08 ໝວດ, 95 ມາດຕາ, ໄດ້ກໍານົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ ໂດຍລວມແມ່ນຄົບຖ້ວນ ແລະ ຈະແຈ້ງສົມຄວນ ແຕ່ເນື້ອໃນທີ່ໄດ້ກໍານົດໄວ້ໃນບາງມາດຕາຂອງກົດໝາຍ ຍັງບໍ່ສາມາດລະບຸລະອຽດ. ສະນັ້ນ, ອົງການກວດກາແຫ່ງລັດ ຈຶ່ງອອກຄໍາແນະນໍາການຈັດຕັ້ງປະຕິບັດ ດັ່ງນີ້:

## I. ຈຸດປະສົງ

1. ເພື່ອຜັນຂະຫຍາຍເນື້ອໃນບາງມາດຕາ ຂອງກົດໝາຍໃຫ້ລະອຽດ, ຈະແຈ້ງ, ຮັດກຸມ, ເຂົ້າໃຈງ່າຍ ແລະ ສາມາດຈັດຕັ້ງປະຕິບັດໄດ້;

2. ເພື່ອແນະນໍາ, ອະທິບາຍ ແລະ ຍົກຕົວຢ່າງ ໃຫ້ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ໄດ້ເຂົ້າໃຈ ແລະ ເປັນເອກະພາບຕໍ່ເນື້ອໃນກົດໝາຍ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງ ຖືກຕ້ອງ, ເຂັ້ມງວດ ແລະ ມີຜົນສັກສິດ;

3. ເພື່ອເປັນບ່ອນອີງໃຫ້ ກະຊວງ, ອົງການ, ທ້ອງຖິ່ນ ແລະ ອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ນໍາພາ-ຊີ້ນໍາ ການຈັດຕັ້ງປະຕິບັດຢ່າງແຂງແຮງ.

## II. ແນະນໍາເນື້ອໃນ ບາງມາດຕາຂອງກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ

### 1. ພາກທີ I ບົດບັນຍັດທົ່ວໄປ

### 1.1. ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ

- **ຂໍ້ 3 ພະນັກງານວິສາຫະກິດ** ທີ່ໄດ້ກໍານົດວ່າ: ພະນັກງານວິສາຫະກິດ ໝາຍເຖິງ ພະນັກງານວິສາຫະກິດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດທີ່ມາເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ. ຊຶ່ງຄວາມໝາຍຂອງວິສາຫະກິດເອກະຊົນ ແມ່ນ ການຈັດຕັ້ງທຸລະກິດທີ່ເປັນພື້ນຖານຂອງການສ້າງຕັ້ງ ແລະ ການເຄື່ອນໄຫວກິດຈະການໃດໜຶ່ງ ທີ່ເປັນວິສາຫະກິດທີ່ບໍ່ແມ່ນຂອງລັດ ຫຼື ບໍ່ແມ່ນລັດຖືຮຸ້ນລົງທຶນ ໂດຍມີຮູບການຕ່າງໆຄື: ວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ຊຶ່ງແຕ່ລະຮູບການກໍມີຮູບແບບທີ່ແຕກຕ່າງກັນອອກໄປເຊັ່ນ: ວິສາຫະກິດຮຸ້ນ

ສ່ວນສາມັນ, ວິສາຫະກິດຮຸ້ນສ່ວນຈຳກັດ, ບໍລິສັດຈຳກັດ, ບໍລິສັດຈຳກັດຜູ້ດຽວ ແລະ ບໍລິສັດມະຫາຊົນ. ສະນັ້ນ, ບັນດາພະນັກງານວິສາຫະກິດທີ່ບໍ່ແມ່ນຂອງລັດ ຫຼື ບໍ່ແມ່ນລັດຖືຮຸ້ນລົງທຶນ ຊຶ່ງນອນຢູ່ໃນຮູບການ ແລະ ຮູບແບບທີ່ກ່າວມານີ້ ແມ່ນຖືວ່າເປັນພະນັກງານວິສາຫະກິດເອກະຊົນ ຫາກວ່າ ພະນັກງານດັ່ງກ່າວ ໄດ້ມີພຶດຕິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແມ່ນຈະຖືກດຳເນີນຄະດີໃນສະຖານການສໍ້ລາດບັງຫຼວງ.

ຕົວຢ່າງ: ໃນກໍລະນີ ພະນັກງານຂອງລັດ ມີການສົມຮູ້ຮ່ວມຄິດກັບ ພະນັກງານບໍລິສັດ ໃນການອອກແບບຄິດໄລ່ມູນຄ່າກໍ່ສ້າງບໍ່ຖືກກັບຕົວຈິງ ເພື່ອຜົນປະໂຫຍດຮ່ວມກັນ ຫຼື ຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ພະນັກງານຂອງລັດ ແລະ ພະນັກງານບໍລິສັດນັ້ນ ຈະຖືກດຳເນີນຄະດີໃນສະຖານການສໍ້ລາດບັງຫຼວງ ຕາມປະມວນກົດໝາຍອາຍາ ມາດຕາ 362 ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ.

- **ຂໍ້ 7 ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ** ໄດ້ກຳນົດວ່າ: ການນຳເອົາຊັບສິນທີ່ໄດ້ມາຈາກການສໍ້ລາດບັງຫຼວງ ໂດຍທາງກົງ ຫຼື ທາງອ້ອມ ໄປປ່ຽນຮູບ ຫຼື ປ່ຽນແປງທັງໝົດ ຫຼື ບາງສ່ວນ ໃຫ້ກາຍເປັນຊັບສິນທີ່ຖືກກົດໝາຍ ຫຼື ຮ່ວມຮຸ້ນໃນການລົງທຶນ ໝາຍຄວາມວ່າ: ຊັບສິນທີ່ໄດ້ມາຈາກການກະທຳຜິດຕົ້ນທີ່ເປັນການສໍ້ລາດບັງຫຼວງ ແລ້ວນຳເອົາຊັບສິນດັ່ງກ່າວນັ້ນໄປຟອກ.

ຕົວຢ່າງ: ທ້າວ (ກ) ເປັນພະນັກງານຮັບຜິດຊອບຄັງເງິນສົດ ໄດ້ຍັກຍອກເອົາເງິນຈຳນວນໜຶ່ງທີ່ຕົນຮັບຜິດຊອບ ແລະ ຄຸ້ມຄອງ ແລ້ວນຳເງິນໄປຊື້ກຳມະສິດທີ່ດິນ ເພື່ອໃຫ້ເງິນທີ່ຍັກຍອກມາກາຍເປັນຊັບສິນທີ່ຖືກຕ້ອງຕາມກົດໝາຍ.

**2. ພາກທີ II ການສໍ້ລາດບັງຫຼວງ**

**2.1. ມາດຕາ 21 ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ**

ວັກທີ 2 ທີ່ໄດ້ກຳນົດຄຳວ່າ: ເອກະສານນຳໃຊ້ຊໍ້າຊ້ອນ ຫຼື ເອກະສານໝົດອາຍຸການນຳໃຊ້. ຊຶ່ງສາມາດໄຈ້ແຍກ ໂດຍມີຄວາມໝາຍດັ່ງນີ້:

- ເອກະສານນຳໃຊ້ຊໍ້າຊ້ອນ ແມ່ນ ການນຳໃຊ້ເອກະສານເກົ່າຈຳນວນຫຼາຍຄັ້ງ ເກີນກວ່າເນື້ອໃນເອກະສານກຳນົດໃຫ້. **ຕົວຢ່າງ:** ບໍລິສັດໃດໜຶ່ງ ໄດ້ຮັບອະນຸຍາດຮັບເໝົາກໍ່ສ້າງໂຄງການລົງທຶນຂອງລັດຢູ່ແຂວງໃດໜຶ່ງສຳເລັດ ທ້າວ (ກ) ຫົວໜ້າບໍລິສັດ ຈຶ່ງໄດ້ປະກອບເອກະສານ ຂໍຖອນເງິນຊຳລະຄ່າໂຄງການຈາກແຂວງ ແລະ ໄດ້ຮັບການຊຳລະເງິນຢ່າງຄົບຖ້ວນຕາມມູນຄ່າໂຄງການ ໃນເວລາຕໍ່ມາ ທ້າວ (ກ) ຫົວໜ້າບໍລິສັດ ໄດ້ເອົາເອກະສານດັ່ງກ່າວ ມາຂໍຊຳລະຄ່າໂຄງການນຳສູນກາງອີກ ແລະ ສູນກາງໄດ້ຊຳລະຕາມມູນຄ່າຂອງໂຄງການຕື່ມອີກ ການກະທຳດັ່ງກ່າວຖືເປັນການນຳໃຊ້ເອກະສານຊໍ້າຊ້ອນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ. ໃນກໍລະນີນີ້ ຖືວ່າເປັນການລະເມີດມາດຕາ 21 ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ ແລະ ຈະຖືກດຳເນີນຄະດີໃນສະຖານການສໍ້ລາດບັງຫຼວງ ຕາມປະມວນກົດໝາຍອາຍາ ມາດຕາ 364 ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ.

- ເອກະສານໝົດອາຍຸການນຳໃຊ້ ແມ່ນ ການນຳໃຊ້ເອກະສານໄດ້ສ້າງຂຶ້ນຢ່າງຖືກຕ້ອງ ແຕ່ໄດ້ນຳໃຊ້ເກີນເວລາທີ່ໄດ້ກຳນົດໃນເອກະສານ. ຕົວຢ່າງ: ທ້າວ (ກ) ເປັນພະນັກງານ ໄດ້ສະເໜີຂໍໂກຕ້າໄມ້ ເພື່ອປຸກສ້າງເຮືອນ ຈາກລັດ ແລະ ໄດ້ຮັບອະນຸຍາດ ໂດຍມີກຳນົດເວລາໃນການຈັດຕັ້ງປະຕິບັດໃຫ້ສຳເລັດ ໃນວັນທີ 01 ມັງກອນ 2009 ແຕ່ ທ້າວ (ກ) ບໍ່ນຳໃຊ້ສິດດັ່ງກ່າວໃນການຈັດຕັ້ງປະຕິບັດ ຈົນເວລາຜ່ານໄປຫ້າເດືອນຫຼັງຈາກໝົດກຳນົດເວລາໃນເອກະສານອະນຸຍາດ ທ້າວ (ກ) ຈຶ່ງໄດ້ໄປຕັດເອົາໄມ້ ເຫັນວ່າ: ການກະທຳດັ່ງກ່າວຖືເປັນການນຳໃຊ້ເອກະສານໝົດອາຍຸ. ໃນກໍລະນີນີ້ ຖືວ່າເປັນການລະເມີດມາດຕາ 21 ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ

ແລະ ຈະຖືກດຳເນີນຄະດີໃນສະຖານການສໍ້ລາດບັງຫຼວງ ຕາມປະມວນກົດໝາຍອາຍາ ມາດຕາ 364 ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ.

**3. ພາກທີ III ການຕ້ານການສໍ້ລາດບັງຫຼວງ**

**3.1. ມາດຕາ 25 (ປັບປຸງ) ການເປັນແບບຢ່າງທີ່ດີຂອງພະນັກງານ**

ໄດ້ກຳນົດວ່າ: ພະນັກງານ ຕ້ອງເປັນແບບຢ່າງທີ່ດີໃນການປະຕິບັດກົດໝາຍຢ່າງເຂັ້ມງວດ, ມີຈັນຍາບັນ, ຈັນຍາທຳ, ດຳລົງຊີວິດ ສັດຊື່ບໍລິສຸດ, ໂປ່ງໃສຂາວສະອາດ, ປະຢັດມັດທະຍັດ, ບໍ່ຟຸມເຟືອຍ ແລະ ບໍ່ສໍ້ລາດບັງຫຼວງ ໝາຍຄວາມວ່າ: ນອກຈາກທີ່ໄດ້ລະບຸຕາມເນື້ອໃນທີ່ກ່າວຂ້າງເທິງນີ້ແລ້ວ ຍັງຕ້ອງໄດ້ປະຕິບັດຕາມດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ ແລະ ຈັນຍາບັນສະເພາະຂອງແຕ່ລະຂະແໜງການ.

**3.2 ມາດຕາ 37 (ປັບປຸງ) ການດຳເນີນການສືບສວນ-ສອບສວນ**

- ວັກທີ 2 ໄດ້ກຳນົດວ່າ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພົວພັນກັບພະນັກງານ ຊຶ່ງມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ກໍໃຫ້ດຳເນີນການສືບສວນ-ສອບສວນ ໄປພ້ອມດຽວກັນ. ໝາຍຄວາມວ່າ: ອົງການຕ້ານການສໍ້ລາດບັງຫຼວງ ຈະດຳເນີນຄະດີຕໍ່ບຸກຄົນທີ່ບໍ່ແມ່ນພະນັກງານ ຫາກໄດ້ສົມຮູ້ຮ່ວມຄິດກັບພະນັກງານ ທີ່ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ຈະຖືກດຳເນີນຄະດີໂດຍເຈົ້າໜ້າທີ່ສືບສວນ-ສອບສວນຂອງອົງການຕ້ານການສໍ້ລາດບັງຫຼວງ ໂດຍບໍ່ແຍກສຳນວນຄະດີລະຫວ່າງຜູ້ທີ່ເປັນພະນັກງານກັບຜູ້ທີ່ບໍ່ເປັນພະນັກງານອອກຈາກກັນ ຫຼື ຈະບໍ່ສົ່ງໃຫ້ເຈົ້າໜ້າທີ່ອົງການສືບສວນ-ສອບສວນອື່ນດຳເນີນຄະດີໃນຂັ້ນຕອນການສືບສວນ-ສອບສວນຕ່າງຫາກ ເຖິງວ່າການສໍ້ລາດບັງຫຼວງຈະມີແຕ່ພະນັກງານກໍຕາມ ເພາະຖືວ່າ ບຸກຄົນທີ່ບໍ່ແມ່ນພະນັກງານນັ້ນ ເປັນຜູ້ເຂົ້າຮ່ວມໃນການສໍ້ລາດບັງຫຼວງ ແຕ່ຈະຖືກຕັ້ງຂໍ້ກ່າວຫາອື່ນທີ່ບໍ່ແມ່ນການສໍ້ລາດບັງຫຼວງ ແລະ ຍັງມີຄວາມຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີຂອງການກະທຳຜິດ.

ຕົວຢ່າງ: ເຈົ້າໜ້າທີ່ໄດ້ອອກລາດຕະເວນ ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ ຕາມຂອບເຂດສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ໄດ້ພົບເຫັນ ທ້າວ (ກ) ທີ່ເປັນປະຊາຊົນມີພຶດຕິກຳທີ່ເປັນໜ້າສົງໄສ ຈຶ່ງໄດ້ທຳການກວດຄົ້ນຕົວ ແລະ ຍານພາຫະນະຂອງ ທ້າວ (ກ) ພົບເຫັນ ມີຢາເສບຕິດ ປະເພດ ຢາບ້າ ຈຳນວນ 1 ມັດ ຢູ່ໃນລົດຂອງຜູ້ກ່ຽວ, ເຈົ້າໜ້າທີ່ ຈຶ່ງໄດ້ທຳການກັກຕົວ ທ້າວ (ກ) ໄວ້ ເພື່ອດຳເນີນຄະດີ, ແຕ່ ທ້າວ (ກ) ໄດ້ສະເໜີຈ່າຍເງິນໃຫ້ເຈົ້າໜ້າທີ່ ຈຳນວນ 50,000,000 ກີບ (ຫ້າສິບລ້ານກີບ) ເພື່ອແລກກັບການປ່ອຍຕົວຂອງຜູ້ກ່ຽວ, ເຈົ້າໜ້າທີ່ຈຶ່ງຕົກລົງຮັບເອົາເງິນດັ່ງກ່າວ ພ້ອມທັງປ່ອຍຕົວ ທ້າວ (ກ) ຜ່ານການດຳເນີນການສືບສວນ-ສອບສວນຂອງເຈົ້າໜ້າທີ່ອົງການຕ້ານການສໍ້ລາດບັງຫຼວງ ເຫັນວ່າເຈົ້າໜ້າທີ່ໄດ້ກະທຳຜິດໃນຂໍ້ຫາ: ການຮັບສິນບົນ ແລະ ໄດ້ຊຸດທອດຫາ ທ້າວ (ກ) ຜູ້ທີ່ໃຫ້ສິນບົນ ເຈົ້າໜ້າທີ່ສືບສວນ-ສອບສວນ ອົງການຕ້ານການສໍ້ລາດບັງຫຼວງ ຈຶ່ງອອກໝາຍຮຽກ ທ້າວ (ກ) ມາດຳເນີນການສືບສວນ-ສອບສວນ ເພື່ອດຳເນີນຄະດີຮ່ວມກັບເຈົ້າໜ້າທີ່ຕຳຫຼວດ. ຈາກກໍລະນີດັ່ງກ່າວ ເຈົ້າໜ້າທີ່ຈະມີຄວາມຜິດຕາມປະມວນກົດໝາຍອາຍາ ຢູ່ໃນໝວດທີ 10 ການສໍ້ລາດບັງຫຼວງ ມາດຕາ 358 ການຮັບສິນບົນ, ສ່ວນ ທ້າວ (ກ) ຈະມີຄວາມຜິດໃນໝວດທີ 11 ການກະທຳຜິດກ່ຽວກັບໜ້າທີ່ຮັບຜິດຊອບ ມາດຕາ 369 ການໃຫ້ສິນບົນແກ່ພະນັກງານ ແລະ ການເປັນສື່ກາງ.

**3.3 ມາດຕາ 47 (ປັບປຸງ) ການປະຕິບັດຄຳຕັດສິນຂອງສານ**

- ວັກທີ 1 ໄດ້ກຳນົດວ່າ: ເມື່ອຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຕ້ອງນຳເອົາຄຳຕັດສິນດັ່ງກ່າວນັ້ນມາປະຕິບັດຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການປະຕິບັດຄຳຕັດສິນຂອງສານ. ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງນຳເອົາຄຳຕັດສິນນັ້ນມາເປີດເຜີຍ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ. ໝາຍຄວາມວ່າ: ເມື່ອມີຄຳຕັດສິນຄະດີການສໍ້ລາດບັງຫຼວງທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງນຳເອົາທຸກຄະດີ ມາເປີດເຜີຍ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ເປັນຕົ້ນ ໜັງສືພິມ, ວາລະສານ, ໃບຂ່າວສານ, ຈົດໝາຍເຫດ ແລະ ສື່ເອເລັກໂຕຣນິກ ໃນກຳນົດເວລາຊ້າສຸດບໍ່ໃຫ້ເກີນ ສາມສິບ ວັນ.

**4. ພາກທີ V ອົງການຕ້ານການສໍ້ລາດບັງຫຼວງ**

**4.1 ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ**

ແຂວງ, ນະຄອນຫຼວງ ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຢ່າງຄົບຖ້ວນແລ້ວ ຍັງຕ້ອງໄດ້ປະຕິບັດ ສິດ ແລະ ໜ້າທີ່ ດຳເນີນການຕິດຕາມ, ກວດກາ ກ່ຽວກັບການສໍ້ລາດບັງຫຼວງ ໃນຖັນແຖວພະນັກງານ ຂັ້ນແຂວງ ຄຸ້ມຄອງ ແລະ ພະນັກງານອື່ນຕາມການມອບໝາຍ.

**5. ພາກທີ IX ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**5.1 ມາດຕາ 89 (ປັບປຸງ) ມາດຕະການສຶກສາອົບຮົມ**

ໄດ້ກຳນົດວ່າ: ຜ່ານການດຳເນີນການກວດກາຂອງເຈົ້າໜ້າທີ່ ຫຼື ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ ຫາກພົບເຫັນ ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ການໂກງການປະມູນ ຫຼື ການສໍ້ປະທານ ຂອງພະນັກງານ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5,000,000 ກີບ ແຕ່ຜູ້ກະທຳຜິດມີຄວາມຈິງໃຈລາຍງານ, ຮັບສາລະພາບວ່າໄດ້ກະທຳຜິດຕໍ່ການຈັດຕັ້ງ ແລະ ໄດ້ສົ່ງຊັບທີ່ເອົາໄປ ໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ຢ່າງຄົບຖ້ວນແລ້ວ ຜູ້ກ່ຽວ ກໍຈະຖືກສຶກສາອົບຮົມ ໝາຍຄວາມວ່າ: ຜູ້ທີ່ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ໃນມາດຕາ 19 ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ມາດຕາ 20 ການໂກງການປະມູນ ຫຼື ການສໍ້ປະທານ ເທົ່ານັ້ນທີ່ຈະຖືກນຳໃຊ້ມາດຕະການສຶກສາອົບຮົມ ໃນກໍລະນີຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5,000,000 ກີບ ທີ່ເປັນການກະທຳຄັ້ງທຳອິດ ແລະ ຜູ້ກະທຳຜິດມີຄວາມຈິງໃຈລາຍງານ, ຮັບສາລະພາບວ່າໄດ້ກະທຳຜິດຕໍ່ການຈັດຕັ້ງ ແລະ ໄດ້ສົ່ງຊັບທີ່ເອົາໄປ ໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ຢ່າງຄົບຖ້ວນແລ້ວ.

ສ່ວນພຶດຕິກຳອື່ນ ເຖິງວ່າຈະກໍ່ຄວາມເສຍຫາຍທີ່ມີມູນຄ່າໜ້ອຍ ຫຼື ຫຼາຍ ລ້ວນແຕ່ມີຄວາມຮັບຜິດຊອບທາງອາຍາ.

**5.2 ມາດຕາ 90 (ປັບປຸງ) ມາດຕະການທາງວິໄນ**

ໄດ້ກຳນົດວ່າ: ຜ່ານການດຳເນີນການກວດກາ ຂອງເຈົ້າໜ້າທີ່ ຫຼື ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງຫາກພົບເຫັນ ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ການໂກງການປະມູນ ຫຼື ການສໍ້ປະທານ ຂອງພະນັກງານ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5,000,000 ກີບ ແຕ່ຜູ້ກະທຳຜິດບໍ່ຈິງໃຈລາຍງານ ຫຼື ຫຼົບຫຼີກຈາກຄວາມຜິດ ຜູ້ກ່ຽວ ກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ ໝາຍຄວາມວ່າ: ຜູ້ທີ່ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ໃນມາດຕາ 19 ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ມາດຕາ 20 ການໂກງການປະມູນ ຫຼື ການສໍ້ປະທານ ເທົ່ານັ້ນທີ່ຈະຖືກນຳໃຊ້ມາດຕະການລົງວິໄນ ໃນກໍລະນີຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5,000,000 ກີບ ທີ່ເປັນການກະທຳຄັ້ງທຳອິດ ແລະ ຜູ້ກະທຳຜິດບໍ່ຈິງໃຈລາຍງານ ຫຼື ຫຼົບຫຼີກຈາກຄວາມຜິດ ຜູ້ກ່ຽວ ກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ.

ສຳລັບ ພຶດຕິກຳອື່ນ ເຖິງວ່າຈະກໍ່ຄວາມເສຍຫາຍທີ່ມີມູນຄ່າໜ້ອຍ ຫຼື ຫຼາຍ ລ້ວນແຕ່ມີຄວາມຮັບຜິດຊອບທາງອາຍາ.

**5.3 ມາດຕາ 91 (ປັບປຸງ) ມາດຕະການປັບໃໝ**

ໄດ້ກຳນົດວ່າ: ພະນັກງານຜູ້ໃດ ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ນອກຈາກຈະໄດ້ຮັບໂທດຕັດອິດສະລະພາບ ແລະ ໂທດປັບໃໝທາງອາຍາແລ້ວ ຍັງຕ້ອງໄດ້ຖືກປັບໃໝຕື່ມອີກ ສິບສ່ວນຮ້ອຍ (10%) ຂອງມູນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ. ໝາຍຄວາມວ່າ: ພະນັກງານ ທີ່ຖືກສານຕັດສິນໃຫ້ມີຄວາມຜິດໃນສະຖານການສໍ້ລາດບັງຫຼວງ ນອກຈາກຈະໄດ້ຮັບໂທດຕັດອິດສະລະພາບ ແລະ ໂທດປັບໃໝ ໜຶ່ງສ່ວນຮ້ອຍ (1%) ທາງອາຍາແລ້ວ ຍັງຕ້ອງໄດ້ຖືກປັບໃໝຕື່ມອີກ ສິບສ່ວນຮ້ອຍ (10%) ຂອງມູນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

ຕົວຢ່າງ: ໃນກໍລະນີ ພະນັກງານ ຍັກຍອກຊັບຂອງລັດ ຫຼື ລວມໝູ່ ເປັນຄັ້ງທຳອິດ ທີ່ມີມູນຄ່າ 20,000,000 ກີບ (ຊາວລ້ານກີບ) ແມ່ນຈະຖືກລົງໂທດຕັດອິດສະລະພາບ ໜຶ່ງປີ ຫາ ສອງປີ, ຖືກປັບໃໝທາງອາຍາ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າເສຍຫາຍ ແລະ ຍັງຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ໂດຍກຳນົດເຂົ້າໃນຄຳຕັດສິນຂອງສານເລີຍ.

**5.4 ມາດຕາ 93 (ປັບປຸງ) ມາດຕະການທາງອາຍາ**

ວັກທີ 1 ໄດ້ກຳນົດວ່າ: ພະນັກງານຜູ້ໃດ ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ. ໝາຍຄວາມວ່າ ພະນັກງານ ທີ່ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ແມ່ນຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ໝວດທີ 10 ການສໍ້ລາດບັງຫຼວງ, ແຕ່ຈະຖືກຍົກເວັ້ນຄວາມຜິດທາງອາຍາໃນສອງສະຖານ (ມາດຕາ 362 ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ມາດຕາ 363 ການໂກງການປະມູນ ຫຼື ການສຳປະທານ) ທີ່ກໍ່ຄວາມເສຍຫາຍມູນຄ່າບໍ່ເກີນ 5,000,000 ກີບ ຖ້າຫາກວ່າພະນັກງານຜູ້ນັ້ນໄດ້ກະທຳເປັນຄັ້ງທຳອິດ (ບໍ່ແມ່ນການກະທຳທີ່ເປັນອາຈິນ) ເຖິງຈະຄົບອົງປະກອບຂອງການກະທຳຜິດທາງອາຍາແລ້ວກໍຕາມ ພະນັກງານຜູ້ນັ້ນແມ່ນຈະຖືກສຶກສາອົບຮົມ ຫຼື ລົງວິໄນ ຕາມແຕ່ລະກໍລະນີ ທີ່ກົດໝາຍໄດ້ກຳນົດໄວ້.

ຕົວຢ່າງ: ທ້າວ (ກ) ເປັນພະນັກງານ ໄດ້ມີການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ຫຼື ໂກງການປະມູນ ຫຼື ການສຳປະທານ ທີ່ມີມູນຄ່າເສຍຫາຍ 4,999,000 ກີບ (ສີ່ລ້ານເກົ້າແສນເກົ້າສິບເກົ້າພັນກີບ) ເປັນຄັ້ງທຳອິດ. ໃນກໍລະນີ ທ້າວ (ກ) ມີຄວາມຈິງໃຈລາຍງານ, ຮັບສາລະພາບວ່າໄດ້ກະທຳຜິດຕໍ່ການຈັດຕັ້ງ ແລະ ໄດ້ສົ່ງຊັບທີ່ເອົາໄປ ໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ຢ່າງຄົບຖ້ວນແລ້ວ ທ້າວ (ກ) ຈະຖືກສຶກສາອົບຮົມ. ແຕ່ວ່າ ທ້າວ (ກ) ບໍ່ຈິງໃຈລາຍງານ ຫຼື ຫຼົບຫຼີກຈາກຄວາມຜິດ ທ້າວ (ກ) ຈະຖືກລົງວິໄນ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນມາດຕາ 90 ຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ. ສຳລັບພຶດຕິກຳອື່ນທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຫາກໄດ້ກໍ່ຄວາມເສຍຫາຍແຕ່ ຊາວລ້ານກີບລົງມາ (20,000,000 ກີບ ລົງຫາ 1 ກີບ ) ກໍຈະມີໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

**III. ການຈັດຕັ້ງປະຕິບັດ**

1. ຄະນະນຳ ກະຊວງ-ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນຕ້ອງຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນ, ຈັດຕັ້ງເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ປະຊາຊົນເວົ້າລວມ, ເວົ້າສະເພາະພະນັກງານຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນຮັບຮູ້-ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

2. ຜ່ານການຈັດຕັ້ງປະຕິບັດຄຳແນະນຳ ສະບັບນີ້ ຖ້າມີຄວາມຫຍຸ້ງຍາກ ໃຫ້ລາຍງານອົງການຕ້ານການສໍ້ລາດບັງຫຼວງ ເພື່ອຊີ້ນຳ, ປັບປຸງ ແລະ ແກ້ໄຂໃຫ້ທັນເວລາ.

**ປະທານ ອົງການກວດກາແຫ່ງລັດ**

ຄຳພັນ ພົມມະທັດ